ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ (ບ້ວງນ້ຳເທີນ 2)

ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2012

# ປຶດເຝິກຫັດ

# ໜ່ວຍ ໂຮງຮຽນຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 1




ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2012

# ປຶ້ມຝຶກຫັດ

# ເນື້ອໃນໜ່ວຍການສອນ

# ໂຮງຮຽນຂອງຂ້ອຍ

## ສໍາລັບເດັກ

## ຊັ້ນອະນຸບານສຶກສາ ປີທີ 1


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ

ກວດແກ້ໂດຍ: ພວງຄໍາ ສົມສະນິດ
ທອງແກ້ວ ອາສາ
ປາກຮຽນ ຫຼວງໄຊຊະນະ
ສົມບູນ ມາສຸວັນ
ເກດ ພັນລັກ
ສີພາພອນ ມະນີວັນ
ວຽງແກ້ວ ພົມມະຈັກ
ມະນີວອນ ອາດຜາສຸກ
ພູມີ ພົມມະວົງສາ

ເຂົ້າໜ້າໂດຍ: ທຸມພັນ ອັນທະວີ
ສີວິໄລ ແກ້ວມະນີວັນ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2012

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກ ດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກໄດ້ສັງເກດ, ທົດລອງ, ຄົ້ນຄິດ ມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກມັກ ແລະ ສົນໃຈຮຽນວິທະຍາສາດຫຼາຍຂຶ້ນ.

ປຶ້ມບົດເຝິກຫັດໜ່ວຍໂຮງຮຽນຂອງຂ້ອຍເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກອາຍຸ 3-4 ປີ.

ປຶ້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບໂຮງຮຽນຕົນເອງມີດັ່ງນີ້:

1. ບຸກຄົນສຳຄັນໃນໂຮງຮຽນ.
2. ຫ້ອງຕ່າງໆ, ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ໃນໂຮງຮຽນ.
3. ການຮັກສາຄວາມສະອາດໃນໂຮງຮຽນ.
4. ການປະຕິບັດຕົນທີ່ເໝາະສົມໃນໂຮງຮຽນ.

ການນຳໃຊ້ປຶ້ມບົດເຝິກຫັດໜ່ວຍໂຮງຮຽນຂອງຂ້ອຍເຂົ້າໃນການກຽມຄວາມພ້ອມ ໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາ ແລ້ວ, ພ້ອມກັນນັ້ນ ຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ເດັກໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປຶ້ມຫົວນີ້ດ້ວຍຕົນເອງໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປຶ້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

**ໜ້າ**

ກິດຈະກຳການຮຽນ-ການສອນ ໜ່ວຍໂຮງຮຽນຂອງຂ້ອຍ ສຳລັບຊັ້ນອະນຸບານສຶກສາ
ປີທີ 1........................................................................................................ 1
ບຸກຄົນສຳຄັນໃນໂຮງຮຽນ.................................................................................. 2
ຄູໃນໂຮງຮຽນ................................................................................................ 3
ແມ່ລ້ຽງ........................................................................................................ 4
ຜູ້ອຳນວຍການໂຮງຮຽນ ແລະ ໜ້າທີ່ຮັບຜິດຊອບ.................................................. 5
ປະຕິບັດຕົນຕໍ່ບຸກຄົນສຳຄັນໃນໂຮງຮຽນ............................................................ 6
ເພື່ອນໃນຫ້ອງຮຽນ......................................................................................... 7
ເຮັດກິດຈະກຳຮ່ວມກັບເພື່ອນ.......................................................................... 8
ເຮັດກິດຈະກຳຮ່ວມກັບເພື່ອນ (ຕໍ່).................................................................. 9
ຫ້ອງຕ່າງໆ, ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ໃນໂຮງຮຽນ............................................. 10
ໂຮງຮຽນ...................................................................................................... 11
ຫ້ອງຮຽນ..................................................................................................... 12
ຫ້ອງຕ່າງໆ ໃນໂຮງຮຽນ.................................................................................. 13
ຫ້ອງຕ່າງໆ ໃນໂຮງຮຽນ (ຕໍ່)........................................................................... 14
ຫ້ອງຕ່າງໆ ໃນໂຮງຮຽນ (ຕໍ່)........................................................................... 15
ຫ້ອງຕ່າງໆໃນໂຮງຮຽນ (ຕໍ່)............................................................................ 16
ເຄື່ອງໃຊ້ໃນຫ້ອງຮຽນ ແລະ ສັນຍະລັກ.............................................................. 17
ເຄື່ອງຫຼິ້ນໃນເດີ່ນ........................................................................................... 18
ເຄື່ອງຫຼິ້ນໃນເດີ່ນ (ຕໍ່)...................................................................................... 19
ເຄື່ອງຫຼິ້ນໃນເດີ່ນ (ຕໍ່)...................................................................................... 20
ຮັກສາເຄື່ອງຫຼິ້ນ ............................................................................................. 21
ຮັກສາເຄື່ອງໃຊ້.............................................................................................. 22
ຮັກສາຄວາມສະອາດໃນໂຮງຮຽນ...................................................................... 23
ຖິ້ມຂີ້ເຫຍື້ອຖືກບ່ອນ........................................................................................ 24
ໂຮງຮຽນສະອາດ............................................................................................ 25
ຫ້ອງນ້ຳສະອາດ............................................................................................. 26
ໂຕະ ແລະ ຕັ່ງສະອາດ...................................................................................... 27
ປະຕິບັດຕົນໃນໂຮງຮຽນ.................................................................................. 28

ມາໂຮງຮຽນ........................................................................................................ 29
ມາໂຮງຮຽນ (ຕໍ່)................................................................................................. 30
ຫຼິ້ນ.................................................................................................................. 31
ຮຽນ................................................................................................................ 32
ກິນ.................................................................................................................. 33
ກິນ (ຕໍ່)............................................................................................................ 34
ນອນ................................................................................................................ 35
ນອນ (ຕໍ່).......................................................................................................... 36

# ກິດຈະກຳການຮຽນ-ການສອນ

# ໜ່ວຍ: ໂຮງຮຽນຂອງຂ້ອຍ

ສຳລັບຊັ້ນອະນຸບານສຶກສາປີທີ 1



**ເນື້ອໃນການຮຽນຂອງໜ່ວຍໂຮງຮຽນຂອງຂ້ອຍປະກອບມີ:**

1. ບຸກຄົນສຳຄັນໃນໂຮງຮຽນ.
2. ຫ້ອງຕ່າງໆ, ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ໃນໂຮງຮຽນ.
3. ຮັກສາຄວາມສະອາດໃນໂຮງຮຽນ.
4. ປະຕິບັດຕົນໃນໂຮງຮຽນ.

# ບຸກຄົນສຳຄັນໃນໂຮງຮຽນ



**ເນື້ອໃນການຮຽນຂອງຫົວຂໍ້ບຸກຄົນສຳຄັນໃນໂຮງຮຽນປະກອບມີ:**

1. ຄູໃນໂຮງຮຽນ ແລະ ແມ່ລ້ຽງ.
2. ຜູ້ອຳນວຍການໂຮງຮຽນ ແລະ ໜ້າທີ່ຮັບຜິດຊອບ.
3. ປະຕິບັດຕົນຕໍ່ບຸກຄົນສຳຄັນໃນໂຮງຮຽນ.
4. ເພື່ອນໃນຫ້ອງຮຽນ.
5. ເຮັດກິດຈະກຳຮ່ວມກັບເພື່ອນ.

# ຄູໃນໂຮງຮຽນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ ແລະ ໜ້າທີ່ຂອງຄູປະຈຳຫ້ອງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນໃຜໃນຮູບນີ້? ລາວກຳລັງເຮັດຫຍັງ? ຄູຂອງຫຼານຊື່ຫຍັງ?
- ສະຫຼຸບ: ຄູປະຈຳຫ້ອງຊື່.... ມີໜ້າທີ່ຮັບຜິດຊອບແມ່ນສອນໜັງສື ແລະ ເບິ່ງແຍງເດັກ.
- ທາສີຮູບເດັກນ້ອຍ ແລະ ຄູ ໂດຍນຳໃຊ້ສີຕາມໃຈ.

# ແມ່ລ້ຽງ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ ແລະ ໜ້າທີ່ຂອງແມ່ລ້ຽງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນໃຜໃນຮູບນີ້? ໃຜເປັນຜູ້ເອົາອາຫານໃຫ້ເດັກນ້ອຍ?
- ສະຫຼຸບ: ແມ່ລ້ຽງຊື່... ມີໜ້າທີ່ແຕ່ງອາຫານໃຫ້ເດັກ.
- ທາສີຮູບແມ່ລ້ຽງ ໂດຍນຳໃຊ້ສີຕາມໃຈ.

# ຜູ້ອຳນວຍການໂຮງຮຽນ ແລະ ໜ້າທີ່ຮັບຜິດຊອບ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ຜູ້ອຳນວຍການໂຮງຮຽນ ແລະ ໜ້າທີ່ຮັບຜິດຊອບ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນໃນຮູບນີ້ແມ່ນໃຜ? ເພິ່ນມີໜ້າທີ່ເຮັດຫຍັງໃນໂຮງຮຽນ?
- ສະຫຼຸບ: ຜູ້ອຳນວຍການໂຮງຮຽນຊື່... ມີໜ້າທີ່ຮັບຜິດຊອບລວມໃນໂຮງຮຽນ.
- ທາສີຮູບຜູ້ອຳນວຍການ ແລະ ດອກໄມ້ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນຕໍ່ບຸກຄົນສຳຄັນໃນໂຮງຮຽນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປະຕິບັດຕົນຕໍ່ບຸກຄົນສຳຄັນໃນໂຮງຮຽນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຫຼານຄວນປະຕິບັດຕົນຕໍ່ບຸກຄົນໃນໂຮງຮຽນແນວໃດແດ່?
- ສະຫຼຸບ: ການປະຕິບັດຕົນຕໍ່ບຸກຄົນສຳຄັນໃນໂຮງຮຽນ: ຕ້ອງເວົ້າສຸພາບ ໂດຍໃຊ້ຄຳເວົ້າ: ໂດຍ, ຂ້ານ້ອຍ, ຂ້ອຍ, ເຈົ້າ, ຂໍໂທດ, ຂອບໃຈ; ຮູ້ຈັກນົບ, ຂໍອະນຸຍາດ ເມື່ອຕົນເອງ ຕ້ອງການ ສິ່ງຂອງ ແລະ ຂໍໂທດເມື່ອກະທຳຜິດ.
- ທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ເພື່ອນໃນຫ້ອງຮຽນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເພື່ອນໃນຫ້ອງຮຽນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ ເດັກກຳລັງເຮັດຫຍັງ? ຫຼານຮູ້ຊື່ເພື່ອນໃນຫ້ອງຮຽນບໍ່?
- ສະຫຼຸບ: ເພື່ອນໃນຫ້ອງຮຽນຊື່...
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ເຮັດກິດຈະກຳຮ່ວມກັບເພື່ອນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການເຮັດກິດຈະກຳຮ່ວມກັບເພື່ອນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍກຳລັງເຮັດຫຍັງໃນຮູບນີ້? ການຫຼິ້ນຮ່ວມກັນຫຼາຍຄົນມີຜົນດີແນວໃດ?
- ສະຫຼຸບ: ເດັກນ້ອຍທຸກຄົນສາມາດຫຼິ້ນຮ່ວມກັບເພື່ອນ.
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ເຮັດກິດຈະກຳຮ່ວມກັບເພື່ອນ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກການເຮັດກິດຈະກຳຮ່ວມກັບເພື່ອນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບກຳລັງເຮັດຫຍັງຮ່ວມກັນ?
- ສະຫຼຸບ: ເດັກນ້ອຍທຸກຄົນສາມາດຮຽນຮ່ວມກັບເພື່ອນ.
- ທາສີຮູບຄູ ແລະ ເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງຕ່າງໆ, ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ໃນໂຮງຮຽນ





**ເນື້ອໃນການຮຽນຂອງຫົວຂໍ້ ຫ້ອງຕ່າງໆ, ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ໃນໂຮງຮຽນປະກອບມີ:**

1. ໂຮງຮຽນ.
2. ຫ້ອງຕ່າງໆໃນໂຮງຮຽນ.
3. ເຄື່ອງໃຊ້ໃນຫ້ອງຮຽນ ແລະ ສັນຍະລັກ.
4. ເຄື່ອງຫຼິ້ນໃນເດີ່ນ.
5. ຮັກສາເຄື່ອງຫຼິ້ນ, ເຄື່ອງໃຊ້.

# ໂຮງຮຽນ




**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ໂຮງຮຽນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ພວກຫຼານເຫັນຫຍັງໃນຮູບນີ້? ໂຮງຮຽນຂອງຫຼານຊື່ແນວໃດ?
- ສະຫຼຸບ: ໂຮງຮຽນຂອງຫຼານຊື່....................
- ທາສີຮູບໂຮງຮຽນ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງຮຽນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ຫ້ອງຮຽນ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫ້ອງຮຽນຂອງຫຼານແມ່ນຫ້ອງຫຍັງ?
- ສະຫຼຸບ: ຫ້ອງຮຽນຂອງຫຼານ ແມ່ນອະນຸບານ ປີທີ 1.
- ທາສີຮູບຫ້ອງຮຽນ ໂດຍນໍາໃຊ້ສີຕາມໃຈ.

# ຫ້ອງຕ່າງໆໃນໂຮງຮຽນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຫ້ອງຕ່າງໆໃນໂຮງຮຽນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ແມ່ນຫ້ອງຫຍັງ? ໂຮງຮຽນຂອງຫຼານມີຫ້ອງຫຍັງແດ່?
- ສະຫຼຸບ: ໃນໂຮງຮຽນມີຫ້ອງຮຽນ.
- ທາສີຮູບຫ້ອງຮຽນ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງຕ່າງໆໃນໂຮງຮຽນ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຫ້ອງຕ່າງໆໃນໂຮງຮຽນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ແມ່ນຫ້ອງຫຍັງ? ໂຮງຮຽນຂອງຫຼານມີຫ້ອງນ້ຳບໍ່?
- ສະຫຼຸບ: ໃນໂຮງຮຽນມີຫ້ອງນ້ຳ.
- ທາສີຮູບຫ້ອງນ້ຳ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງຕ່າງໆໃນໂຮງຮຽນ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຫ້ອງຕ່າງໆໃນໂຮງຮຽນ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ ກໍາລັງເຮັດຫຍັງ? ໂຮງຮຽນຂອງຫຼານມີຫ້ອງອ່ານບໍ່?
- ສະຫຼຸບ: ໃນໂຮງຮຽນ ມີຫ້ອງອ່ານ.
- ທາສີຮູບເດັກນ້ອຍ ໂດຍນໍາໃຊ້ສີຕາມໃຈ.

# ຫ້ອງຕ່າງໆໃນໂຮງຮຽນ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຫ້ອງຕ່າງໆໃນໂຮງຮຽນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ໂຮງຮຽນຂອງຫຼານມີຫ້ອງອາຫານບໍ່?
- ສະຫຼຸບ: ໃນໂຮງຮຽນມີຫ້ອງອາຫານ.
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງໃຊ້ໃນຫ້ອງຮຽນ ແລະ ສັນຍະລັກ




**ຈຸດປະສົງ:** ເພື່ອໃຫ້ເດັກບອກເຄື່ອງໃຊ້ໃນຫ້ອງຮຽນ ແລະ ສັນຍະລັກ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງແດ່ໃນຮູບນີ້? ໃນຫ້ອງຮຽນຂອງຫຼານມີເຄື່ອງໃຊ້ຫຍັງແດ່?
- ສະຫຼຸບ: ເຄື່ອງໃຊ້ໃນຫ້ອງຮຽນ ແລະ ສັນຍະລັກມີ ໂຕະ, ຕັ່ງ, ກະດານ, ສໍດຳ, ສໍສີ ແລະ ປຶ້ມຂຽນ.
- ທາສີຮູບເຄື່ອງໃຊ້ໃນຫ້ອງຮຽນ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງຫຼິ້ນໃນເດີ່ນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງຫຼິ້ນໃນເດີ່ນ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ໂຮງຮຽນຂອງຫຼານມີເຄື່ອງຫຼິ້ນແບບນີ້ບໍ່?
- ສະຫຼຸບ: ເຄື່ອງຫຼິ້ນໃນເດີ່ນໂຮງຮຽນມີເຄື່ອງຕ່າງໆ.
- ທາສີຮູບເຄື່ອງຕ່າງໆ ໂດຍນໍາໃຊ້ສີຕາມໃຈ.

# ເຄື່ອງຫຼິ້ນໃນເດີ່ນ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງຫຼິ້ນໃນເດີ່ນ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ໂຮງຮຽນຂອງຫຼານມີເຄື່ອງຫຼິ້ນແບບນີ້ບໍ່?
- ສະຫຼຸບ: ເຄື່ອງຫຼິ້ນໃນເດີ່ນມີຕະລູດ.
- ທາສີຮູບຕະລູດ ໂດຍນໍາໃຊ້ສີຕາມໃຈ.

# ເຄື່ອງຫຼິ້ນໃນເດີ່ນ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງຫຼິ້ນໃນເດີ່ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ໂຮງຮຽນຂອງຫຼານມີເຄື່ອງຫຼິ້ນແບບນີ້ບໍ່?
- ສະຫຼຸບ: ເຄື່ອງຫຼິ້ນໃນເດີ່ນໂຮງຮຽນມີໂອ້ນຊາ.
- ທາສີຮູບໂອ້ນຊາ ໂດຍນຳໃຊ້ສີຕາມໃຈ.

# ຮັກສາເຄື່ອງຫຼິ້ນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການຮັກສາເຄື່ອງຫຼິ້ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບກຳລັງເຮັດຫຍັງ? ຫຼານຄວນຮັກສາເຄື່ອງຫຼິ້ນແນວໃດ?
- ສະຫຼຸບ: ການຮັກສາເຄື່ອງຫຼິ້ນແມ່ນບໍ່ທຳລາຍ, ບໍ່ມ້າງເພ ແລະ ເກັບມ້ຽນໄວ້ໃຫ້ຖືກບ່ອນ.
- ທາສີຮູບເດັກນ້ອຍ ແລະ ເຄື່ອງຫຼິ້ນ ໂດຍນຳໃຊ້ສີຕາມໃຈ.

# ຮັກສາເຄື່ອງໃຊ້



**ຈຸດປະສົງ:** ເພື່ອໃຫ້ເດັກບອກການຮັກສາເຄື່ອງໃຊ້.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານຄວນຮັກສາເຄື່ອງໃຊ້ແນວໃດ?
- ສະຫຼຸບ: ການຮັກສາເຄື່ອງໃຊ້ແມ່ນ ບໍ່ທຳລາຍ, ບໍ່ມ້າງເພ ແລະ ເກັບມ້ຽນໄວ້ໃຫ້ ຖືກບ່ອນ.
- ທາສີຮູບເຄື່ອງໃຊ້ໃນຫ້ອງຮຽນ ໂດຍນຳໃຊ້ສີຕາມໃຈ.

# ຮັກສາຄວາມສະອາດໃນໂຮງຮຽນ



**ເນື້ອໃນການຮຽນຂອງຫົວຂໍ້ ຮັກສາຄວາມສະອາດໃນໂຮງຮຽນປະກອບມີ:**

1. ຖິ້ມຂີ້ເຫຍື້ອຖືກບ່ອນ.
2. ໂຮງຮຽນສະອາດ.
3. ຫ້ອງຮຽນສະອາດ.
4. ຫ້ອງນ້ຳສະອາດ.
5. ໂຕະ ແລະ ຕັ່ງສະອາດ.

# ຖິ້ມຂີ້ເຫຍື້ອຖືກບ່ອນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຫຼານເຄີຍຖິ້ມຂີ້ເຫຍື້ອໃສ່ກະຕ່າບໍ່?
- ສະຫຼຸບ: ການຖິ້ມຂີ້ເຫຍື້ອຕ້ອງຖິ້ມໃສ່ຖັງ ຫຼື ກະຕ່າ.
- ທາສີຮູບເດັກນ້ອຍມ້ຽນຂີ້ເຫຍື້ອ.

# ໂຮງຮຽນສະອາດ




**ຈຸດປະສົງ:** ເພື່ອໃຫ້ເດັກບອກການຮັກສາຄວາມສະອາດໂຮງຮຽນ ແລະ ຫ້ອງຮຽນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຢາກໃຫ້ໂຮງຮຽນ ແລະ ຫ້ອງຮຽນສະອາດ ຕ້ອງເຮັດແນວໃດ?
- ສະຫຼຸບ: ການຮັກສາຄວາມສະອາດໂຮງຮຽນ ແລະ ຫ້ອງຮຽນ ແມ່ນບໍ່ຖິ້ມຂີ້ເຫຍື້ອໃສ່ເດີ່ນໂຮງຮຽນ, ຫ້ອງຮຽນ, ປັດກວາດເດີ່ນ, ເຊັດຖູຝາຫ້ອງຮຽນ ແລະ ໂຮງຮຽນ.
- ທາສີຮູບເດັກນ້ອຍອະນາໄມເດີ່ນໂຮງຮຽນ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງນ້ຳສະອາດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການຮັກສາຄວາມສະອາດຫ້ອງນ້ຳ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ເປັນຫຍັງຈຶ່ງລ້າງຫ້ອງນ້ຳ, ຫ້ອງຖ່າຍ?
- ສະຫຼຸບ: ການຮັກສາຄວາມສະອາດຫ້ອງນ້ຳແມ່ນ ບໍ່ຖິ້ມຂີ້ເຫຍື້ອໃສ່ໃນຫ້ອງນ້ຳ, ຫ້ອງຖ່າຍ, ຖ່າຍໜັກ, ຖ່າຍເບົາຖືກບ່ອນ ແລະ ເວລາຖ່າຍແລ້ວຕ້ອງລ້າງໃຫ້ສະອາດ.
- ທາສີຮູບເດັກນ້ອຍອະນາໄມຫ້ອງນ້ຳ ໂດຍນຳໃຊ້ສີຕາມໃຈ.

# ໂຕະ ແລະ ຕັ່ງສະອາດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການຮັກສາຄວາມສະອາດໂຕະ ແລະ ຕັ່ງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ?
- ສະຫຼຸບ: ການຮັກສາຄວາມສະອາດໂຕະ ແລະ ຕັ່ງຕ້ອງ ເຊັດໂຕະ, ເຊັດຕັ່ງ, ບໍ່ຂີດໂຕະ, ຕັ່ງ ແລະ ເກັບມ້ຽນໃຫ້ຖືກບ່ອນ.
- ທາສີຮູບເດັກນ້ອຍອະນາໄມໂຕະ ແລະ ຕັ່ງ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນໂຮງຮຽນ









**ເນື້ອໃນການຮຽນຂອງຫົວຂໍ້ ການປະຕິບັດຕົນໃນໂຮງຮຽນປະກອບມີ:**

1. ມາໂຮງຮຽນ.
2. ຫຼິ້ນ.
3. ຮຽນ.
4. ກິນ.
5. ນອນ.

# ມາໂຮງຮຽນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປະຕິບັດຕົນໃນການມາໂຮງຮຽນ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກໍາລັງເຮັດຫຍັງ? ຫຼານມາໂຮງຮຽນທັນເວລາບໍ່?
- ສະຫຼຸບ: ການປະຕິບັດຕົນໃນການມາໂຮງຮຽນຕ້ອງມາທັນເວລາ, ບໍ່ຂາດໂຮງຮຽນ.
- ທາສີຮູບເດັກນ້ອຍມາໂຮງຮຽນ ໂດຍນໍາໃຊ້ສີຕາມໃຈ.

# ມາໂຮງຮຽນ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປະຕິບັດຕົນໃນການມາໂຮງຮຽນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ນຸ່ງເຄື່ອງແນວໃດມາໂຮງຮຽນ? ຫຼານນຸ່ງເຄື່ອງແນວໃດມາໂຮງຮຽນ?
- ສະຫຼຸບ: ການປະຕິບັດຕົນໃນການມາໂຮງຮຽນຕ້ອງ ນຸ່ງເຄື່ອງເປັນລະບຽບ.
- ທາສີຮູບເດັກນ້ອຍມາໂຮງຮຽນ ໂດຍນຳໃຊ້ສີຕາມໃຈ.

# ຫຼິ້ນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປະຕິບັດຕົນໃນການຫຼິ້ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ການຫຼິ້ນຮ່ວມກັບໝູ່ຄວນຫຼິ້ນແນວໃດ?
- ສະຫຼຸບ: ການປະຕິບັດຕົນໃນການຫຼິ້ນຄື ຫຼິ້ນເປັນເວລາ, ລະວັງຄວາມປອດໄພໃນການຫຼິ້ນ, ບໍ່ຕີກັນ, ບໍ່ຍາດເຄື່ອງຫຼິ້ນກັນ ແລະ ເກັບມ້ຽນເຄື່ອງຫຼິ້ນຖືກບ່ອນ.
- ທາສີຮູບເດັກນ້ອຍຫຼິ້ນຮ່ວມກັນ ໂດຍນຳໃຊ້ສີຕາມໃຈ.

# ຮຽນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປະຕິບັດຕົນໃນການຮຽນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ໃນເວລາຮຽນຫຼານຄວນເຮັດແນວໃດ?
- ສະຫຼຸບ: ການປະຕິບັດຕົນໃນການຮຽນຕ້ອງຕັ້ງໃຈຮຽນ, ຟັງຄູອະທິບາຍ, ບໍ່ຢອກໝູ່ໃນເວລາຮຽນ.
- ທາສີຮູບເດັກນ້ອຍ ແລະ ຄູ ໂດຍນຳໃຊ້ສີຕາມໃຈ.

# ກິນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປະຕິບັດຕົນໃນການກິນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ໃນເວລາກິນ ຫຼານຄວນເຮັດແນວໃດ?
- ສະຫຼຸບ: ການປະຕິບັດຕົນໃນການກິນແມ່ນ ບໍ່ຍາດກິນຂອງໝູ່, ຫຍໍ້າອາຫານໃຫ້ແຫຼກ, ບໍ່ລົມກັນໃນເວລາກິນ, ບໍ່ເຄາະຖ້ວຍບ່ວງ ແລະ ກິນແລ້ວເກັບມ້ຽນ.
- ທາສີຮູບເດັກນ້ອຍກິນອາຫານ ໂດຍນຳໃຊ້ສີຕາມໃຈ.

# ກິນ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປະຕິບັດຕົນໃນການກິນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ກິນເຂົ້າແລ້ວຫຼານຄວນເຮັດແນວໃດ?
- ສະຫຼຸບ: ການປະຕິບັດຕົນໃນການກິນ ແມ່ນເວລາກິນແລ້ວຕ້ອງເກັບມ້ຽນ.
- ທາສີຮູບເດັກນ້ອຍມ້ຽນຖ້ວຍ ໂດຍນຳໃຊ້ສີຕາມໃຈ.

# ນອນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປະຕິບັດຕົນໃນການນອນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ?
- ສະຫຼຸບ: ການປະຕິບັດຕົນໃນການນອນແມ່ນບໍ່ຢອກໝູ່, ບໍ່ລົມກັນໃນເວລານອນ, ບໍ່ຍາດເຄື່ອງນອນໝູ່ ແລະ ນອນຖືກບ່ອນຕົນເອງ
- ທາສີຮູບເດັກນ້ອຍນອນ ໂດຍນຳໃຊ້ສີຕາມໃຈ.

# ນອນ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປະຕິບັດຕົນໃນເວລາຕື່ນນອນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ໃນເວລານອນຫຼານຄວນເຮັດແນວໃດ?
- ສະຫຼຸບວ່າ: ການປະຕິບັດຕົນໃນເວລາຕື່ນນອນ ແມ່ນຕື່ນນອນແລ້ວເກັບມ້ຽນບ່ອນນອນໃຫ້ເປັນລະບຽບ.
- ທາສີຮູບເດັກນ້ອຍມ້ຽນເຄື່ອງນອນ ໂດຍນຳໃຊ້ສີຕາມໃຈ.